**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງບໍລິຄໍາໄຊ
ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ 1657/ຍທຂ.
ບໍລິຄໍາໄຊ, ວັນທີ 21 ເມສາ 2026.

# ໜັງສືແຈ້ງເຊີນປະມູນ

**ເຖິງ: ບັນດາບໍລິສັດທີ່ມີຄວາມສົນໃຈເຂົ້າຮ່ວມປະມູນໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນແຄມນໍ້າຂອງ ແບບລຽນຫີນ ບ້ານຍອຍໄຊຊ່ວງ5 ເມືອງທ່າພະບາດ ແຂວງບໍລິຄໍາໄຊ, ລວງຍາວ 300 ແມັດ.**

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງລົງທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງບໍລິຄໍາໄຊ ສະບັບເລກທີ 103/ຂບຊ, ລົງວັນທີ 11 ມີນາ 2026, ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ ຂະແໜງທາງນໍ້າ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄໍາໄຊ;
- ອີງຕາມ ໜັງສືແຈ້ງແຜນການລົງທຶນຂອງລັດ ປະຈໍາປີ 2026 ຂອງປະທານຄະນະກໍາມະການປົກຄອງແຂວງ ສະບັບເລກທີ 07/ຄປຂ, ລົງວັນທີ 27 ມີນາ 2026 (ຄັ້ງທີ 2);

**ພະແນກໂຍທາທິການ ແລະ ຂົນສົ່ງ** ຂໍຖືເປັນກຽດເຊີນ: ບັນດາບໍລິສັດ, ລັດວິສາຫະກິດ ແລະ ເອກະຊົນ ທີ່ມີຄວາມສາມາດດ້ານທຶນຮອນ, ປະສົບການ ທີ່ມີຄວາມສົນໃຈ ເພື່ອສະເໜີເຂົ້າຮ່ວມການປະມູນໂຄງການກໍ່ສ້າງປ້ອງກັນຕາຝັ່ງເຈື່ອນແຄມນໍ້າຂອງ ແບບລຽນຫີນ ບ້ານຍອຍໄຊຊ່ວງ5 ເມືອງທ່າພະບາດ ແຂວງບໍລິຄໍາໄຊ, ລວງຍາວ 300 ແມັດ, ສໍາລັບຜູ້ເຂົ້າຮ່ວມປະມູນຕ້ອງມີເງື່ອນໄຂດັ່ງລຸ່ມນີ້:

1. ບໍລິສັດຕ້ອງມີທະບຽນວິສາຫະກິດກໍ່ສ້າງທາງນໍ້າ ຫຼື ຂະແໜງການໃກ້ຄຽງທີ່ມີທະບຽນຖືກຕ້ອງຕາມລະບຽບກົດໝາຍໃນການລົງທຶນ;
2. ເອກະສານຢັ້ງຢືນຖານະການເງິນຈາກທະນາຄານຂອງບໍລິສັດ ຫຼື ມີການຢັ້ງຢືນເງິນຝາກຢ່າງໜ້ອຍຈໍານວນ 2% ຂອງມູນຄ່າໂຄງການ;
3. ເອກະສານຢັ້ງຢືນພາຫະນະກົນຈັກ ເປັນຂອງຕົນເອງ ແລະ ຈໍານວນພົນ;
4. ມີປະສົບການ ແລະ ຜົນງານຕ່າງໆ ກ່ຽວກັບກິດຈະການກໍ່ສ້າງປ້ອງກັນຕາຝັ່ງ ຫຼື ໃກ້ຄຽງ;
5. ບໍລິສັດໃດທີ່ຕ້ອງການຊື້ເອກະສານປະມູນຄົບຊຸດ ແມ່ນທາງໂຄງການເລີ່ມຂາຍເອກະສານນັບແຕ່ວັນທີ 21 ເມສາ 2026 ເຖິງວັນທີ 27 ພຶດສະພາ 2026 ໃນໂມງເວລາລັດຖະການ, ຢູ່ທີ່ຂະແໜງທາງນໍ້າ ພະແນກໂຍທາທິການ ແລະ ຂົນສົ່ງ, ແລະ ຂະແໜງຈັດຊື້-ຈັດຈ້າງ ພະແນກການເງິນແຂວງ, ຊອງລະ 2.000.000 ກີບ, ສໍາລັບຈໍານວນເງິນດັ່ງກ່າວ ຈະບໍ່ມີການສົ່ງຄືນ, ວິທີການສໍາລະຕ້ອງເປັນເງິນສົດ;

6. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ບົດແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
7. ວັນທີ 27 ພຶດສະພາ 2026, ເວລາ 09:00 ໂມງ ແມ່ນລົງກວດກາພາກສະໜາມກ່ອນການເປີດຊອງປະມູນ;
8. ການເປີດຊອງປະມູນໃນວັນທີ 29 ພຶດສະພາ 2026 ເວລາ 14:00 ໂມງ ທີ່ຫ້ອງປະຊຸມພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ, ສ່ວນການຍື່ນຊອງປະມູນຕ້ອງຍື່ນກ່ອນເວລາ 13:30 ໂມງ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຖືກພິຈາລະນາຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ;

ຫວັງວ່າທ່ານຈະປະຕິບັດຕາມທີ່ໄດ້ແຈ້ງມາຂ້າງເທິງນີ້ ແລະ ນຳເອົາບໍລິສັດຂອງທ່ານເຂົ້າຮ່ວມການແຂ່ງຂັນການປະມູນຕາມ ວັນເວລາ ແລະ ສະຖານທີ່ ທີ່ໄດ້ກຳນົດໄວ້.

**ຫົວໜ້າພະແນກ**

ທອງລິດ ຟອງສີບວນ

**ເບີໂທຕິດຕໍ່:**

ທ່ານ ວົງເດືອນ ກິ່ງກິດຕິສັກ 020 55269283 ຂະແໜງທາງນ້ຳ ພະແນກ ຍທຂ ແຂວງ

ທ່ານ ຄຳປະເສີດ ພົມມະວົງ 020 28870055 ຂະແໜງການຈັດຊື້-ຈັດຈ້າງ ພະແນກການເງິນ ແຂວງ